ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR

ຂ່າວ
NEWS

ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ທພລ.ອຊ ສະໜອງສິນເຊື່ອແກ່ການບໍລິການ



ທະນາຄານພັດທະນາລາວສາຂາອຸດົມໄຊ (ທພລ.ອຊ) ເປັນທະນາຄານທຸລະກິດລັດ ດຳເນີນທຸລະກຳການເງິນຄວບຄູ່ກັບການປະຕິບັດນະໂຍບາຍສິນເຊື່ອຕາມນະໂຍບາຍຂອງລັດຖະບານກໍ່ຄືແຜນພັດທະນາເສດຖະກິດ-ສັງຄົມຂອງທ້ອງຖິ່ນ. ໃນຫວ່າງບໍ່ດົນມານີ້, ທ່ານ ສົມແພງ ລັດຕະນະວົງ ຫົວໜ້າ ທພລ ສາຂາ ອຸດົມໄຊ ໄດ້ໃຫ້ຮູ້ວ່າ: ໃນປີ 2020 ຜ່ານມາ; ທພລ.ອຊ ມີຍອດຊັບສິນທັງໝົດ 259,1 ຕື້ກີບທຽບໃສ່ແຜນການເກີນແຜນ 11%; ລະດົມແຫຼ່ງທຶນເງິນຝາກສາມາດລະດົມໄດ້ 249,6 ຕື້ກີບທຽບໃສ່ແຜນການປີປະຕິບັດໄດ້ເກີນແຜນ 7,1%, ທຽບໃສ່ປີ 2019 ເພີ່ມຂຶ້ນ 8,2 % ຊຶ່ງໃນນີ້ເງິນຝາກປະຈຳກວມເອົາ 53,4 % ຂອງເງິນຝາກທັງໝົດ. ມີຍອດສິນເຊື່ອ 164,6 ຕື້ກີບ, ທຽບໃສ່ແຜນປະຕິບັດໄດ້ 81,6% ທຽບໃສ່ປີ 2019 ຫຼຸດລົງ9,2 %. ຕໍ່ກັບການສະໜອງທຶນຂອງໂຄງການຊຸກຍູ້ການຜະລິດ ເພື່ອແກ້ໄຂຜົນກະທົບຈາກການລະບາດຂອງພະຍາດໂຄວິດ-19; ທພລ.ອຊ ຍັງບໍ່ທັນໄດ້ປ່ອຍສິນເຊື່ອເທື່ອ ເຊິ່ງໃນປະຈຸບັນໄດ້ມີການຄົ້ນຄວ້າ, ສົ່ງເອກະສານໄປຜ່ານສະພາບໍລິຫານສິນເຊື່ອສຳນັກງານໃຫຍ່ແລ້ວ 1 ລາຍໃນວົງເງິນ 4,5 ຕື້ກີບ ເປົ້າໝາຍສ້າງຕັ້ງໂຮງແຮມ; ຄົ້ນຄວ້າເອກະສານລູກຄ້າສະເໜີຂໍສິນເຊື່ອ 7 ລາຍໃນວົງເງິນລວມທີ່ລູກຄ້າສະເໜີ 54,6 ຕື້ກີບ ຄາດວ່າໃນເດືອນ 2/2021 ຈະໄດ້ສົ່ງໄປຜ່ານສະພາບໍລິຫານສິນເຊື່ອ ທພລ ສຳນັກງານໃຫຍ່.

ໃນໄລຍະດຽວ, ກໍ່ມີເງິນຝາກປະຢັດ-ຝາກກະແສລາຍວັນ 15.098 ບັນຊີ, ມີບັດ ATM 4.653 ບັດ, mobile trust 1.453 ລາຍ Trust pay QR code 386 ລາຍ , Alipay 9 ລາຍ LDB wallet ມີ 15 ຕົວແທນຝາກ-ຖອນ ແລະ 1 ຕົວແທນຮ້ານຄ້າຮັບຊຳລະ, ທຽບໃສ່ແຜນສູ້ຊົນປະຕິບັດໄດ້ປະມານ 44%; ສຳລັບການເບີກຈ່າຍເງິນເດືອນພະນັກງານລັດບໍລິຫານທີ່ອັບໂລດເງິນເດືອນຜ່ານ ທພລ ປະກອບມີເມືອງແບງ ແລະ ເມືອງຮຸນ ປະກອບມີ 47 ຫ້ອງການ, ຈຳນວນເງິນ58,8 ຕື້ກວ່າກີບຕໍ່ປີ; ພິເສດໃນກາງເດືອນ 9 ຜ່ານມານີ້ 2 ເມືອງດັ່ງກ່າວ ຍັງສືບຕໍ່ເຊັນສັນຍາຕື່ມອີກ ແລະ ຍັງມີແຜນຂະຫຍາຍເບີກເງິນເດືອນລັດບໍລິຫານໃຫ້ເຂດອື່ນໆຕື່ມ.





ທ່ານ ສົມແພງ ລັດຕະນະວົງ ຫົວໜ້າ ທພລ ສາຂາອຸດົມໄຊທິດທາງແຜນການປີ 2021 ນີ້ ແມ່ນເອົາໃຈໃສ່ຂອດການບໍລິການຕ່າງໆຂອງ ທພລ ໃຫ້ຢູ່ໃນເກນທີ່ດີ; ສືບຕໍ່ເດີນຕະຫຼາດປຸກລະດົມໂຄສະນາຜະລິດຕະພັນໃໝ່ຂອງ ທພລ ໃຫ້ກວ້າງຂວາງ; ສູ້ຊົນລະດົມເງິນຝາກໃຫ້ໄດ້ຕາມແຜນການປີ 2020 ໃຫ້ເພີ່ມຂຶ້ນຈາກປີ 2019 ເທົ່າກັບ 6%; ສູ້ຊົນນໍາເອົາລູກຄ້າທີ່ມີເງື່ອນໄຂຄວາມພ້ອມເຂົ້າເຖິງແຫຼ່ງທຶນ SME, ເອົາໃຈໃສ່ຄຸ້ມຄອງ ແລະ ບໍລິຫານສິນເຊື່ອທີ່ປ່ອຍໃໝ່ໃຫ້ເປັນສິນເຊື່ອທີ່ມີຄຸນນະພາບ; ຂະຫຍາຍສິນເຊື່ອບົນພື້ນຖານການກັ່ນຕອງລູກໜີ້; ຄວບຄຸມ, ກວດກາ ຕິດຕາມດ້ານລະບຽບ ແລະ ນະໂຍບາຍສິນເຊື່ອເພື່ອຕິຖອຍປາກົດການຈະກໍ່ໃຫ້ເກີດເປັນໜີ້ເສຍໃນອານາຄົດ, ສູ້ຊົນປ່ອຍກູ້ໃຫ້ໄດ້ປະມານ 201,7 ຕື້ກີບຂຶ້ນໄປ; ສູ້ຊົນການເຄື່ອນໄຫວດໍາເນີນທຸລະກິດໃຫ້ມີຜົນກໍາໄລຫຼາຍກ່ວາເກົ່າໃນຕໍ່ໜ້າ.

**# ຂ່າວ: ຣັດສະໝີ ດວງສັດຈະ**

# ຊາດພັດທະນາ ພາເສດຖະກິດກ້າວໄກ ພ້ອມກັນນໍາໃຊ້ເງິນກີບ